## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 10 ທັນວາ 2006 ( 12-10-2006 )

---

## ຄວາມຫວັງທີ່ຄົງຢູ່:

**ຂໍ້ພຣະຄັມພີໃນບົດຮຽນ:** 1 ເປໂຕ 1:3-21

**ຄວາມຈິງໃນພຣະຄັມພີ:** ພວກທີ່ເຊື່ອສາມາດຢູ່ກັບຄວາມຫວັງໄດ້ເພາະວ່າຄວາມລອດພົ້ນຂອງພວກເຂົາໄດ້ຖືກຮັບປະກັນ ໂດຍການຕາຍ ແລະການຄືນມາຈາກຕາຍຂອງພຣະເຢຊູຄຣິດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ວຍທ່ານໃຫ້ມີປະສົບການຊີວິດ ທີ່ມີການສັບປ່ຽນພອນຂອງພຣະເຈົ້າໂດຍ:

- ການເຂົ້າໃຈຕໍ່ພື້ນຖານຂອງຄວາມຫວັງ ແລະ
- ການເຫັນພ້ອມຢ່າງເຕັມປ່ຽມຕໍ່ຫລັກຖານທີ່ທ່ານສາມາດດຳຣົງຢູ່ກັບຄວາມຫວັງໄດ້.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### <u>ບົດນຳ:</u>

ຖ້າເຮົາອ່ານຫນັງສືພິມຫລືນິຕະສານໃນບໍ່ດົນມານີ້ ພວກເຮົາສາມາດພົບທັງຄົນທີ່ມີຫວັງແລະຄົນທີ່ຫມົດຫວັງ. ຈົ່ງປຽບທຽບເບິ່ງວ່າຄົນທີ່ມີຫວັງແລະຄົນທີ່ຫມົດຫວັງແຕກຕ່າງກັນຢ່າງໃດ?

**ຄຳຖາມ:** ຖ້າພວກເຮົາຢູ່ກັບບຸກຄົນໃດບຸກຄົນນຶ່ງທີ່ກ່າວມາຂ້າງເທິງນີ້ ພວກເຮົາຈະຫນູນໃຈເຂົາເຈົ້າຢ່າງໃດ?

### 1. <u>ພື້ນຖານຂອງຄວາມຫວັງ:</u> ( 1 ເປໂຕ 1:3-5;18-21 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ 1 ເປໂຕ 1:3-5;18-21

2). **ອະທິບາຍ:** ຈົດໝາຍແຫ່ງຄວາມຫວັງຂອງອັຄສາວົກເປໂຕສະບັບນີ້ໄດ້ຂຽນຢູ່ກຸງໂຣມ, ທ່ານເປໂຕໄດ້ເວົ້າເຖິງຄຣິສຕະຈັກສມັຍໃຫມ່ ໃນປະເທດເທີກີ, ເປັນຄຣິສຕະຈັກທີ່ມີທັງຄົນຢິວ ແລະຄົນຕ່າງຊາດ. ເປໂຕໄດ້ຂຽນໄປຫນູນໃຈເຂົາເຈົ້າໃນ

ຂະນະທີ່ກຳລັງຖືກຂົ່ມເຫງຍ້ອນເຂົາເຈົ້າເຊື່ອໃນອົງພຣະເຢຊູຄຣິດ.

3). ອະທິບາຍຄວາມຈິງສອງປະການຕໍ່ໄປນີ້:

(1) ຄວາມຫວັງໃນພຣະເຢຊູຄຣິດເຈົ້າເປັນຮາກຖານຂອງພວກເຮົາທີ່ເຊື່ອໃນພຣະອົງ ແລະ

(2). ຄວາມຫວັງເປັນຜົນທີ່ສະແດງເຖິງຄວາມເຊື່ອໃນພຣະເຢຊູຄຣິດຂອງພວກເຮົາ.

**ອະທິບາຍ:** ໃນພຣະຄັມພີຄຳວ່າ " ຄວາມຫວັງ " ແມ່ນຄວາມໝັ້ນໃຈທີ່ພຣະເຈົ້າຊົງກະທຳເພື່ອເຮົາຜ່ານມາ ແລະຮັບປະກັນວ່າພຣະເຈົ້າຈະຊົງກະທຳໃນອະນາຄົດ. **ຖາມ:** . ທ່ານຈະບັນລະຍາຍເຖິງຄວາມຫວັງອັນແທ້ຈິງວ່າແນວໃດ? ມັນຈະຄ້າຍຄືກັບສິ່ງໃດ?

4). ໃຫ້ນັກຮຽນອະທິບາຍຄວາມແຕກຕ່າງຣະຫວ່າງຄວາມຫວັງຂອງຝ່າຍໂລກ ແລະຄວາມຫວັງຕາມພຣະຄັມພີ

5). **ຄຳຖາມ:** ແມ່ນຫຽັງຄືມໍຣະດົກ? ມີສິ່ງໃດແດ່ທີ່ຄົນໄດ້ຮັບຈາກມູນມໍຣະດົກ? ໃຫ້ນັກຮຽນອະທິບາຍຄຸນຄ່າຂອງມໍຣະດົກອັນນັ້ນ ແລະບອກວ່າແມ່ນຫຽັງທີ່ເຮັດໃຫ້ສິ່ງນັ້ນມີຄຸນຄ່າ? ແລ້ວໃຫ້ນັກຮຽນບອກວ່າແມ່ນຫຽັງຄືມໍຣະດົກທີ່ເປໂຕໄດ້ເວົ້າເຖິງ -ການບັງເກີດໃໝ່ໃນອົງພຣະເຢຊູຄຣິດ, ຊຶ່ງຈະເປີດເຜີຍໃຫ້ເຫັນຢ່າງຊັດແຈ້ງໃນຄາວສຸດທ້າຍ.

6) **ອະທິບາຍ:** ພິນັຍກັມແລະຄຳສັນຍາ. ຄົນໃດຄົນນຶ່ງສາມາດທີ່ຈະກຳນົດໃຫ້ສິ່ງໃດສິ່ງຕົກເປັນກັມມະສິດຂອງຜູ້ທີ່ລາວປາຖນາຢາກຈະໃຫ້, ຊຶ່ງຈະມີລາຍເຊັນຕໍ່ໜ້າພຍານແລະກ່າວຄຳສາບານແລ້ວຈຳຕາເປັນການຄ້ຳປະກັນວ່າເປັນມໍຣະດົກ. ພຣະເຈົ້າ, ອົງພຣະບິດາຂອງພວກເຮົາຊົງໄດ້ຮຽກເອີ້ນໃຫ້ບັງເກີດໃໝ່ໃນພຣະເຢຊູຄຣິດ, ແລະຜ່ານການເປັນຄືນມາຈາກຕາຍຂອງພຣະເຢຊູຄຣິດ, ພຣະອົງຊົງເປັນພຍານ ຊົງໃຫ້ຄຳສັນຍາ ແລະຊົງປະທັບຕາໃສ່ມໍຣະດົກຂອງພວກເຮົາ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> 1 ເປໂຕ 1:3-5,18-21

1) ທ່ານຄິດວ່າຢ່າງໃດໃນຄວາມໝາຍຂອງທ່ານເປໂຕທີ່ວ່າຄວາມຫວັງທີ່ຄົງຢູ່ນັ້ນຜ່ານທາງພຣະເຢຊູຄຣິດ? ແມ່ນຫຍັງເປັນພື້ນຖານຂອງຄວາມຫວັງທີ່ຄົງຢູ່?

2) ເວລາທ່ານປະສົບກັບຄວາມຫຍຸ້ງຍາກລຳບາກ ແລະທ່ານໄດ້ຮັບຄວາມໜູນໃຈໃຫ້ດຳເນີນໃນຄວາມຫວັງຕໍ່ຫລືບໍ່, ທ່ານໄດ້ໄວ້ວາງໃຈໃຈຄຳສັນຍາຂອງພຣະເຈົ້າ ແລະໄດ້ດຳເນີນຕໍ່ຫລືບໍ່?

3) ການຄືນພຣະຊົນຂອງພຣະເຢຊູຄຣິດມີຄວາມສຳຄັນຕໍ່ຄວາມຫວັງຂອງທ່ານແນວໃດ?

4). ທ່ານສາມາດແບ່ງປັນເຣື່ອງຄວາມເຊື່ອ, ຄວາມຫວັງນີ້ໃຫ້ກັບຄົນອື່ນໄດ້ຢ່າງໃດ?

## ຂ. <u>ທັສນະຂອງຄວາມຫວັງ:</u> ( 1 ເປໂຕ 1:6-9 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ເປໂຕ 1:6-9

2) ທ່ານເປໂຕໄດ້ໜູນໃຈພວກເຮົາໃນຂໍ້ທີ 6 ເຣື່ອງການທົນທຸກຕໍ່ຄວາມໂສກເສົ້າດ້ວຍການຖືກທົດລອງຕ່າງໆ ວ່າ: ເປັນຊົ່ວລະຍະເວລານຶ່ງເທົ່ານັ້ນ.

3). ໜູນໃຈໃຫ້ນັກຮຽນຢູ່ໃກ້ຊິດພຣະເຈົ້າຫລາຍຂຶ້ນເພື່ອຈະໄດ້ຜ່ານພົ້ນຈາກຕໍ່ການທົດລອງນັ້ນ.

4) **ຄຳຖາມ:** ຄຣິສຕຽນຈະຮູ້ໄດ້ຢ່າງໃດວ່າ ຄວາມເຊື່ອຂອງເຂົາເປັນຄວາມຈິງ? ເປົ້າໝາຍຄວາມລອດພົ້ນຂອງພວກເຮົາແມ່ນຫຍັງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 1 ເປໂຕ 1:6-9

1. ພວກເຮົາສາມາດຊົມຊື່ນຍິນດີໃນເວລາພົບກັບຄວາມຫຍຸ້ງຍາກໄດ້ຫລືບໍ່?
2. ທ່ານເປໂຕໄດ້ໃຫ້ຄວາມຫວັງເປັນພື້ນຖານໃນສິ່ງໃດແດ່?
3. ໃນຊີວິດຄຣິສຕຽນຂອງທ່ານໆມີປະສົບການເໝືອນທ່ານເປໂຕຫລືບໍ່?
4). ໃນເມື່ອທ່ານປະເຊີນກັບການໂສກເສົ້າ ທ່ານເຄີຍອ້ອນວອນອະທິຖານຫາພຣະເຈົ້າໃຫ້ຊ່ອຍຫລືບໍ່?
5). ທ່ານເປໂຕໄດ້ເວົ້າເຖິງຄວາມເຊື່ອຂອງພວກເຮົາແນວໃດແດ່?
6). ເຮັດແນວໃດຈຶ່ງຈະໃຫ້ເປົ້າໝາຍຂອງພວກເຮົາສຳເຣັດຜົນ (ໄປເຖິງຫລັກຊັຍ?)

**3. <u>ຄວາມສຳເລັດຂອງຄວາມຫວັງ:</u>** ( 1 ເປໂຕ 1:10-12)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 1 ເປໂຕ 1:10-12

2) ໃນເມື່ອອ່ານພຣະຄຳຂໍ້ນີ້ແລ້ວເຮົາຈະຮູ້ວ່າທ່ານເປໂຕໄດ້ກ່າວໄປເຖິງຜູ້ປະກາດພຣະທັມໃນສມັຍເດີມເຊັ່ນ: ຜູ້ປະກາດພຣະທັມເອຊາຢາ ( ເອຊາຢາ ບົດທີ 40) ຜູ້ປະກາດພຣະທັມ ມີກາ (ມີກາ ບົດທີ 5) ໂຮເຊອາ(ໂຮເຊອາ ບົດທີ 11) ແລະເຢເຣມີຢາບົດທີ 31)

3) **ຄຳຖາມ:** ຜູ້ປະກາດພຣະທັມສມັຍນັ້ນໄດ້ຮັບຂ່າວເຫລົ່ານັ້ນມາຈາກຜູ້ໃດ? ທ່ານເປໂຕມີຄວາມເຂົ້າໃຈເຖິງຄວາມຈິງເຫລົ່ານີ້ໄດ້ຢ່າງໃດ? ພວກເຮົາສາມາດເຂົ້າໃຈພຣະເຈົ້າໄດ້ຢ່າງໃດ? *(ຂໍ້ 11 ພຣະວິນຍານຂອງພຣະຄຣິດສະຖິດຢູ່ນຳເຂົາເຈົ້າ ແລະຂໍ້ທີ 12 ທີ່ໄດ້ຊົງສະແດງໃຫ້ເຂົາເຈົ້າຮູ້ຈັກ )*

4) **ຄຳອະທິບາຍເຖິງສິດທີ່ຈະໄດ້ຮັບຄວາມລອດພົ້ນ:** ເປໂຕກ່າວວ່າ "ເທວະດາປາຖນາພິຈາຣະນາເບິ່ງ" (ຂໍ້ທີ12) ຄຳວ່າພິຈາຣະນາເບິ່ງ ແມ່ນເພັ່ງເບິ່ງຢ່າງຄັກແນ່" ດັ່ງທີ່ໂຢຮັນແລະມາຣີອາໄທມັກດາລາໄດ້ເຂົ້າໄປເບິ່ງອຸບໂມງຝັງສົບພຣະເຢຊູທີ່ຫວ້າງເປົ່າ (ໂຢຮັນ 20:5, 11) ແມ່ນແຕ່ເທວະດາເຫລົ່ານີ້ກໍຢາກເບິ່ງຢາກຄັກແນ່ເຖິງຄວາມລອດພົ້ນນີ້. **ຄຳຖາມ:** ມີໃຜແດ່ທີ່ທ່ານຮູ້ວ່າລາວໄດ້ພິຈາຣະນາເບິ່ງຄວາມລອດພົ້ນຢ່າງຄັກແນ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:** 1 ເປໂຕ 1:10-12

1). ໃນຊີວິດຈິງຂອງທ່ານ, ທ່ານໄດ້ຊອກຫາຫລືສແວງຫາຄວາມລອດພົ້ນຢ່າງເອົາຈິງເອົາຈັງແທ້ບໍ? ທ່ານໄດ້ພົບຫຼັງແດ່?

2). ທ່ານຈະບັນລະຍາຍຄວາມຄິດເຫັນເຣື່ອງຄວາມລອດພົ້ນຈາກຜູ້ປະກາດພຣະທັມບາງຄົນແນວໃດ? ຈາກເທວະດາ? ແລະຈາກຄວາມຄິດເຫັນຂອງທ່ານເອງ?

3). ທ່ານປາຖນາຢາກໄດ້ຄວາມລອດພົ້ນບໍ່ ເໝືອນກັບທ່ານເປໂຕທີ່ວ່າ: ແມ່ນແຕ່ເທວະດາກໍຍັງໂນ້ມຕົວລົງຢາກເຫັນສິ່ງທັງປວງນີ້ແມ່ນຫຍັງ?

**4. <u>ຊີວິດທີ່ມີຄວາມຫວັງ:</u>** ( 1 ເປໂຕ 1:13)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 1 ເປໂຕ 1:13

2) ການກະທຳແລະຜົນໄດ້ຮັບຂອງຊີວິດຂອງຄວາມຫວັງໃນພຣະເຢຊູຄຣິດເຈົ້ານັ້ນ ຖ້າຫາກເຮົາຕັ້ງຈິດຕັ້ງໃຈໃນການເປັນສາວົກ ສຸມໃສ່ຜົນສຳເລັດຂອງພຣະເຢຊູຄຣິດດ້ວຍພຣະຄຸນ ແລະດ້ວຍການສັມພັນກັບພຣະອົງແລ້ວເຮົາຈະໄດ້ຮັບຄວາມລອດພົ້ນຢ່າງສົມຫວັງ.

3) **ຄຳຖາມ:** (1) ເຮັດແນວໃດຈຶ່ງຈະມີຈິດໃຈທີ່ຕຽມພ້ອມສຳລັບຄວາມລອດພົ້ນຂອງພວກເຮົາ? (2)ເຮົາຄວນຈະຕຽມຫົວຄິດໃຫ້ພ້ອມທີ່ຈະຮັບຜົນຂອງຄວາມຫວັງຢ່າງໃດ? (3) ຖ້າເຮົາເຮັດຕາມພຣະເຢຊູເຮົາຈະໄດ້ຮັບຫຍັງເປັນຜົນຕອບແທນ? (4) ຖ້າພວກເຮົາມີຄົນຜູ້ທີ່ບໍ່ເຊື່ອຢູ່ໃນຫ້ອງຮຽນ ເຮົາຄວນຈະເວົ້າເຣື່ອງຄວາມລອດພົ້ນກັບລາວຕອນໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດຄວາມເຫັນ:**

1) ທ່ານໄດ້ກະກຽມ ດ້ານຈິດໃຈ, ດ້ານຮ່າງກາຍ, ດ້ານສິນທັມ, ດ້ານຈິດວິນຍານ ສຳລັບຊີວິດຂອງທ່ານແນວໃດ? ຖ້າສິ່ງໃດສິ່ງນຶ່ງທີ່ກ່າວມານີ້ຫາກອ່ອນແອ ຈະມີຫຍັງເກີດຂຶ້ນໃນຊີວິດຂອງທ່ານ? ການຕຽມພ້ອມທີ່ເກີດຜົນເພື່ອຕ້ອນຮັບພຣະເຢຊູຄຣິດມີຫຍັງແດ່?

2) ພຣະຄຸນຂອງພຣະເຈົ້າໄດ້ທຳງານໃນຊີວິດຂອງທ່ານແນວໃດ ທີ່ເຮັດໃຫ້ທ່ານດຳເນີນຊີວິດທີ່ມີຄວາມຫວັງ?

**<u>ສລູບ:</u>**

1. ໜູນໃຈໃຫ້ນັກຮຽນທວນຄິດເຣື່ອງຄວາມຫວັງຢູ່ສເມີ ແລະຈົດຈຳສິ່ງທີ່ເປັນມໍຣະດົກທີ່ພຣະເຢຊູຄຣິດໄດ້ຊົງກ່າວໄວ້ນັ້ນ.
2. ໜູນໃຈນັກຮຽນໃຫ້ມີຄວາມຫວັງໃນພຣະເຈົ້າແຕ່ລະມື້ ເຖິງແມ່ນເຂົາເຈົ້າຄິດວ່າບໍ່ມີຫວັງ, ມີອຸປສັກ ແລະທໍ້ຖອຍໃຈ.
3. ອະທິຖານປິດຫ້ອງຮຽນ.